# MAFIPP ທົບທວນການຈັດຕັ້ງປະຕິບັດແຜນງານປະຈຳປີ 2012




ໃນຕອນແລງຂອງວັນທີ 11 ມັງກອນ ຜ່ານມານີ້ ໂຄງການສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກໃຫ້ຫຼາຍຂຶ້ນ (MAFIPP) ໄດ້ຈັດກອງປະຊຸມທົບທວນການຈັດຕັ້ງປະຕິບັດແຜນງານປະຈຳປີ 2012 ຂຶ້ນທີ່ດອນຈັນພາເລດ ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ດຣ ອາຄົມ ປູະເສີດ ຮັກສາການຫົວໜ້າກົມຄຸ້ມຄອງສະຖາບັນການເງິນຈຸລະພາກ ທະນາຄານແຫ່ງ ສປປ ລາວ, ທ່ານ ຈິມ ແອນເດີສັນ (Jim Anderson) ຫົວໜ້າທີ່ປຶກສາທາງດ້ານວິຊາການ, ພ້ອມນີ້ກໍມີບັນດາຄະນະຮັບຜິດຊອບໂຄງການ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂຄງການດັ່ງກ່າວແມ່ນແຜນງານຮ່ວມມືລະຫວ່າງທະນາຄານແຫ່ງ ສປປ ລາວ (ໃນນາມລັດຖະບານ) ແລະ ອົງການສະຫະປະຊາຊາດກອງທຶນເພື່ອພັດທະນາ ເຊິ່ງແຜນງານນີ້ໄດ້ຂື້ນງົບປະມານທັງໝົດປະມານ 7 ລ້ານໂດລາສະຫະລັດ ໃນນັ້ນທຶນປະກອບຈາກ UNCDF/UNDP 1,5 ລ້ານໂດລາສະຫະລັດ ແລະ ຈາກ UNCDF MicroLead 1,8 ລ້ານໂດລາສະຫະລັດ ພ້ອມນັ້ນຍັງຈະຕ້ອງໄດ້ລະດົມເພີ່ມອີກ 3,7 ລ້ານໂດລາສະຫະລັດ ເພື່ອສ້າງຂະແໜງການເງິນໃນ ສປປ ລາວ ແລະ ມີໄລຍະເວລາຈັດຕັ້ງປະຕິບັດແຜນງານ

4 ປີ 6 ເດືອນ ພາຍໃນກຳນົດປີ 2014 ໂດຍແມ່ນທະນາຄານແຫ່ງ ສປປ ລາວ ເປັນຄະນະຈັດຕັ້ງປະຕິບັດແຜນງານດັ່ງກ່າວ ເຊິ່ງເລັ່ງໃສ່ການຍົກລະດັບຂີດຄວາມສາມາດ ແລະ ພັດທະນາຂະແໜງການທີ່ກ່ຽວຂ້ອງເປັນຕົ້ນແມ່ນ ລະດັບມະຫາພາກ: ຊ່ວຍສ້າງຂີດຄວາມສາມາດໃຫ້ກັບລະດັບຜູ້ວາງລະບຽບການ ແລະ ການກຳກັບດູແລ, ລະດັບກາງ: ໃຫ້ການສະໜັບສະໜູນຜູ້ສະໜອງການບໍລິການດ້ານທຸລະກິດທີ່ຕອບສະໜອງກ່ຽວກັບໂຄງຮ່າງພື້ນຖານການບໍລິການດ້ານການເງິນ ແລະ ລະດັບຈຸລະພາກ: ຊ່ວຍສ້າງຂີດຄວາມສາມາດຂອງຜູ້ບໍລິຫານດ້ານການເງິນເພື່ອການຂະຫຍາຍຕົວ ແລະ ດຶງດູດການລົງທຶນ.

ໃນກອງປະຊຸມທ່ານ ນາງ ເກສອນ ມະນີວົງ ຜູ້ຈັດການໂຄງການ ຍັງໄດ້ຍົກໃຫ້ເຫັນຜົນສຳເລັດທີ່ສຳຄັນໃນປີ 2011 ຄື: ການຝຶກອົບຮົມພະນັກງານທະນາຄານແຫ່ງ ສປປ ລາວ, ການທັດສະນະສຶກສາຢູ່ປະເທດບັງຣາເດັດກ່ຽວກັບການອອມ ແລະ ທະນຄານທີ່ໃຫ້ບໍລິການຜ່ານໂທລະສັບມືຖື, ຈຳນວນ 9 ສະຖາບັນການເງິນຈຸລະພາກ - ສະຫະກອນສິນເຊື່ອໄດ້ຮັບການຝຶກອົບຮົມ - ການສະໜັບສະໜູນໂດຍຜ່ານອົງການ CARD ທີ່ໄດ້ຮັບງົບປະມານຈາກ MicroLead (UNCDF), ທະນາຄານ ACLEDA ປະຈຳລາວ ໄດ້ຮັບການສະໜັບສະໜູນທຶນຈາກ MicroLead ເພື່ອຜັນຂະຫຍາຍວຽກງານໃນເຂດຊົນນະບົດ ແລະ ສະໜັບສະໜູນກຸ່ມປະຕິບັດງານດ້ານການເງິນຈຸລະພາກເພື່ອສ້າງຄວາມເຂັ້ມແຂງໃຫ້ຂະແໜງການເງິນຈຸລະພາກ ພ້ອມນັ້ນຍັງໄດ້ປຶກສາຫາລືກ່ຽວກັບແຜນການຈັດຕັ້ງປະຕິບັດເປົ້າໝາຍສຳຄັນສຳລັບປີ 2012.